ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0719 /ອຄ.

ນະຄອນຫຼວງວຽງຈັນ, ວັນທີ່ 03 ເມສາ 2009.

# ຂໍ້ຕົກລົງ

## ວ່າດ້ວຍມາດຕະຖານໂຮງງານ ອຸດສາຫະກຳປຸງແຕ່ງໄມ້

- ອີງຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ເລກທີ 01/99/ສພຊ, ລົງວັນທີ່ 3/4/99 ແລະ ດຳລັດ ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ເລກທີ 67/ນຍ, ລົງວັນທີ່ 12/4/06.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 188/ນຍ, ລົງວັນທີ່ 17/8/06.
- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ການປະສານງານໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້ ເລກທີ 17/ນຍ, ລົງວັນທີ່ 22/9/08.

ເພື່ອຮັບປະກັນໃຫ້ແກ່ການດັດສົມ ແລະ ຄຸ້ມຄອງ ການເຄື່ອນໄຫວກິດຈະການ ຂອງບັນດາໂຮງງານອຸດສາຫະກຳປຸງແຕ່ງໄມ້ ແລະ ໂຮງງານປຸງແຕ່ງໄມ້ຂະໜາດນ້ອຍແບບຄອບຄົວ ໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ, ດຳລັດຈັດຕັ້ງປະຕິບັດກົດໝາຍ ເລກທີ 67/ນຍ ແລະ ຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 17/ນຍ ໃຫ້ສອດຄ່ອງກັບເງື່ອນໄຂ, ສະພາບຕົວຈິງໃນປະຈຸບັນ. ດ້ານໜຶ່ງ, ເພື່ອປະຕິບັດຕາມທິດຂອງລັດຖະບານ ໃນການປຸງແຕ່ງເປັນຜະລິດຕະພັນໄມ້ສຳເລັດຮູບ ດ້ວຍການສ້າງມູນຄ່າເພີ່ມໃຫ້ໄດ້ຫຼາຍ ແລະ ເພື່ອແນໃສ່ເຮັດໃຫ້ການເຄື່ອນໄຫວກິດຈະການໂຮງງານ ໃຫ້ຖືກຕ້ອງ, ເປັນລະບຽບຮຽບຮ້ອຍດີ ແລະ ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

**ລັດຖະມົນຕີວ່າການກະຊວງ ອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ I
## ຫຼັກການທົ່ວໄປ

**ມາດຕາ 1:** ຈຸດປະສົງ

1.1 ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ໃນການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ເທື່ອລະກ້າວ. ໂດຍນຳໃຊ້ຊັບພະຍາກອນໄມ້ໃຫ້ເກີດຜົນປະໂຫຍດສູງສຸດ ດ້ວຍການສ້າງມູນຄ່າເພີ່ມ ແລະ ສ້າງລາຍຮັບຂອງຊາດໃຫ້ນັບມື້ຫຼາຍຂຶ້ນ ຈາກການປຸງແຕ່ງເປັນຜະລິດຕະພັນໄມ້ສຳເລັດຮູບເພື່ອຮັບໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ.

1.2 ເພື່ອຊຸກຍູ້, ສົ່ງເສີມ, ຄຸ້ມຄອງ, ກວດກາ ແລະ ດັດສົມ ບັນດາໂຮງງານອຸດສາຫະກໍາປຸງແຕ່ງໄມ້ ໃຫ້ເຄື່ອນໄຫວດໍາເນີນທຸລະກິດ ຢ່າງຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ, ຖືກຕ້ອງຕາມລະບຽບການກ່ຽວກັບການຄຸ້ມຄອງໂຮງງານ ແລະ ລະບຽບກົດໝາຍອື່ນໆທີ່ກ່ຽວຂ້ອງ.

1.3 ເພື່ອກໍານົດວິທີການ ແລະ ມາດຕະການຕ່າງໆໃນການຄຸ້ມຄອງມະຫາພາກ ຕໍ່ກັບໂຮງງານອຸດສາຫະກໍາປຸງແຕ່ງໄມ້ ທຸກຂັ້ນ, ທຸກຂະໜາດ ລວມທັງມາດຕະຖານທາງດ້ານເຕັກນິກຂອງໂຮງງານ ແລະ ຂະບວນການປຸງແຕ່ງໄມ້ ແນ່ໃສ່ໃຫ້ມີຄວາມເປັນເອກະພາບກັນ ຢູ່ໃນຂອບເຂດທົ່ວປະເທດ.

<u>ມາດຕາ 2:</u> **ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ເພື່ອການດັດສົມ ແລະ ຄຸ້ມຄອງ ການເຄື່ອນໄຫວກິດຈະການໂຮງງານອຸດສາຫະກໍາປຸງແຕ່ງໄມ້ ທຸກຂັ້ນ, ທຸກຂະໜາດ ລວມທັງໂຮງງານປຸງແຕ່ງໄມ້ຂະໜາດນ້ອຍແບບຄອບຄົວ ໃນຂອບເຂດທົ່ວປະເທດ.

<u>ມາດຕາ 3:</u> **ຄໍານິຍາມ**

ໂຮງງານອຸດສາຫະກໍາປຸງແຕ່ງໄມ້ ທີ່ກໍານົດປະເພດໂຮງງານໃນຂໍ້ 2 ມາດຕາ 9 ຂອງກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ ໝາຍເຖິງ ໂຮງງານທີ່ນໍາໃຊ້ວັດຖຸດິບໄມ້ເປັນຕົ້ນຕໍ ເຊັ່ນ: ໄມ້ທ່ອນ, ໄມ້ກິ່ງງ່າ, ເຫງົ້າໄມ້, ປູດໄມ້, ຕໍໄມ້ ເຂົ້າຜ່ານຂະບວນການປຸງແຕ່ງ ປ່ຽນຈາກສະພາບເດີມ ມາເປັນຜະລິດຕະພັນໄມ້ສໍາເລັດຮູບ ດ້ວຍການນໍາໃຊ້ເຄື່ອງຈັກ ແລະ ແຮງງານຄົນຢູ່ພາຍໃນໂຮງງານ, ຊຶ່ງຜະລິດຕະພັນເຫຼົ່ານັ້ນສາມາດເອົາໄປຈໍາໜ່າຍເປັນສິນຄ້າໄດ້. ໂຮງງານດັ່ງກ່າວໄດ້ຈັດເຂົ້າໃນເລກລະຫັດ 1610, 1621, 1622, 1623, 1624, 1629, 1701, 1702, 1709 ແລະ 3100 ຂອງການຈັດປະເພດອຸດສາຫະກໍາສາກົນ ( ISIC, Iternational Standard for Industrial Classification ).

<u>ມາດຕາ 4:</u> **ຂັ້ນໂຮງງານອຸດສາຫະກໍາປຸງແຕ່ງໄມ້**

ໂຮງງານອຸດສາຫະກໍາປຸງແຕ່ງໄມ້ ແບ່ງອອກເປັນສອງຂັ້ນຄື:

4.1. ໂຮງງານອຸດສາຫະກໍາປຸງແຕ່ງໄມ້ **ຂັ້ນໜຶ່ງ** ໝາຍເຖິງ **ໂຮງງານເລື່ອຍໄມ້, ໂຮງງານປຸງແຕ່ງໄມ້ເຄິ່ງສໍາເລັດຮູບ,** ເລກລະຫັດ 1610, 1621, 1622.1, 1701.1 ໂດຍຜ່ານຂະບວນການປຸງແຕ່ງ, ເພື່ອເປົ້າໝາຍປຸງແຕ່ງໄມ້ທ່ອນ ໃຫ້ເປັນໄມ້ເລື່ອຍ, ໄມ້ຕີຕັບ, ໄມ້ແປຮູບ, ໄມ້ຊອຍ, ໄມ້ຮັບໃຊ້ການກໍ່ສ້າງ, ໄມ້ເຄື່ອງເຮືອນ; ໄມ້ປອກ, ໄມ້ຝານ ແລະ ເຫຍື່ອເຈ້ຍ. ຜະລິດຕະພັນໄມ້ດັ່ງກ່າວສາມາດເປັນວັດຖຸດິບສະໜອງໃຫ້ແກ່ໂຮງງານອຸດສາຫະກໍາປຸງແຕ່ງໄມ້ ຂັ້ນສອງ ເພື່ອປຸງແຕ່ງ ຫຼື ສ້າງມູນຄ່າເພີ່ມເປັນຜະລິດຕະພັນໄມ້ສໍາເລັດຮູບ.

4.2. ໂຮງງານອຸດສາຫະກໍາປຸງແຕ່ງໄມ້ **ຂັ້ນສອງ** ໝາຍເຖິງ **ໂຮງງານປຸງແຕ່ງໄມ້ສໍາເລັດຮູບ ແລະ ໂຮງງານເຟີນີເຈີ,** ເລກລະຫັດ 1621, 1622.2, 1623, 1624, 1629, 1701.2, 1702, 1709 ແລະ 3100 ໂດຍຜ່ານຂະບວນການປຸງແຕ່ງ ເພື່ອເປົ້າໝາຍ ປຸງແຕ່ງໃຫ້ເປັນຜະລິດຕະພັນໄມ້ ເຊັ່ນ: ໄມ້ເຄື່ອງເຮືອນ (ວົງກົບ, ບານປະຕູ, ບານປ່ອງຢ້ຽມ, ໄມ້ຂັ້ນໄດ, ຮາວພະນັກ ແລະ ເຄື່ອງປະກອບໃນອາຄານອື່ນໆ), ໄມ້ປັກເກ, ໄມ້ປູພື້ນ, ໄມ້ອັດ (ໄມ້ອັດປະສານ, ໄມ້ອັດຈາກເສດໄມ້ (particle board) ແລະ ໄມ້ອັດອື່ນໆ); ພາຊະນະບັນຈຸດ້ວຍໄມ້ (ຫີບ, ກ່ອງ, ລັງ, ຖັງ, ພັລເລັດ (Pallete), ແກນມ້ວນສາຍກາບ); ເຈ້ຍ, ເຄື່ອງໃຊ້ອື່ນໆຈາກເຈ້ຍ; ເຟີນີເຈີໄມ້ (ໂຕະ, ຕັ່ງ, ຕູ້, ຕຽງ), ເຄື່ອງຕົບແຕ່ງ, ເຄື່ອງແກະສະລັກ, ເຄື່ອງປະດັບເອ້, ຂອບຮູບ, ເຄື່ອງໃຊ້ສອຍ ແລະ ເຄື່ອງຫັດຖະກໍາໄມ້ອື່ນໆ ເພື່ອເປັນສິນຄ້າຈໍາໜ່າຍພາຍໃນ ແລະ ສົ່ງອອກຕ່າງປະເທດ.

4.3. ໂຮງງານປຸງແຕ່ງໄມ້ຂະໜາດນ້ອຍ, ແບບຄອບຄົວ ໝາຍເຖິງ **ໂຮງງານປຸງແຕ່ງໄມ້ສໍາເລັດຮູບຂະໜາດນ້ອຍ** (ໂຮງງານເຟີນີເຈີໄມ້ຂະໜາດນ້ອຍ) ທີ່ນໍາໃຊ້ແຮງງານຕໍ່າກວ່າ 10 ຄົນ ຫຼື ນໍາໃຊ້ເຄື່ອງຈັກຕໍ່າກວ່າ 5 ແຮງມ້າ ຊຶ່ງໄດ້ຈັດເຂົ້າເປັນ**ໂຮງງານປຸງແຕ່ງໄມ້ຂັ້ນສອງ** ເລກລະຫັດ 1629 ແລະ 3100 ໂດຍຜ່ານຂະບວນການປຸງແຕ່ງແບບຄອບຄົວ ເພື່ອເປົ້າໝາຍ ປຸງແຕ່ງເປັນຊິ້ນສ່ວນຜະລິດຕະພັນໄມ້ ຫຼື ຜະລິດຕະພັນໄມ້ສໍາເລັດຮູບ ເຊັ່ນ: ໂຕະ, ຕັ່ງ, ຕູ້, ຕຽງ, ເຄື່ອງຕົບແຕ່ງ, ເຄື່ອງແກະສະລັກ, ເຄື່ອງປະດັບເອ້, ຂອບຮູບ, ເຄື່ອງໃຊ້ສອຍ ແລະ ເຄື່ອງຫັດຖະກໍາໄມ້ອື່ນໆ ເພື່ອສົ່ງໃຫ້ໂຮງງານໃຫຍ່ ຫຼື ເປັນສິນຄ້າຈໍາໜ່າຍພາຍໃນ ແລະ ສົ່ງອອກຕ່າງປະເທດ.

## ໝວດທີ II
## ມາດຕະຖານໂຮງງານອຸດສາຫະກໍາປຸງແຕ່ງໄມ້

### ມາດຕາ 5: ມາດຕະຖານທຶນຈົດທະບຽນໂຮງງານອຸດສາຫະກໍາປຸງແຕ່ງໄມ້

ໂຮງງານອຸດສາຫະກໍາປຸງແຕ່ງໄມ້ທຸກຂັ້ນ ຕາມທີ່ລະບຸໄວ້ຢູ່ມາດຕາ 4 ຂອງຂໍ້ຕົກລົງສະບັບນີ້, ຕ້ອງມີທຶນຈົດທະບຽນທີ່ຖືກຕ້ອງຕາມກົດໝາຍວ່າດ້ວຍວິສາຫະກິດ.

### ມາດຕາ 6: ມາດຕະຖານຂອງໂຮງງານອຸດສາຫະກໍາປຸງແຕ່ງໄມ້

ໂດຍອີງໃສ່ລະບຽບການລວມກ່ຽວກັບມາດຕະຖານຂອງໂຮງງານອຸດສາຫະກໍາປຸງແຕ່ງ, ໂຮງງານອຸດສາຫະກໍາປຸງແຕ່ງໄມ້ຂັ້ນໜຶ່ງ ແລະ ຂັ້ນສອງ ຕ້ອງມີມາດຕະຖານຕົ້ນຕໍ ຄືດັ່ງນີ້:

**6.1. ມາດຕະຖານດ້ານສະຖານທີ່ຕັ້ງ ແລະ ບໍລິເວນໂຮງງານ**

6.1.1. **ສະຖານທີ່ຕັ້ງໂຮງງານ:** ໂຮງງານອຸດສາຫະກໍາປຸງແຕ່ງໄມ້ທຸກຂັ້ນ ຕ້ອງຕັ້ງຢູ່ນອກເຂດປ່າສະຫງວນ, ປ່າປ້ອງກັນ ແລະ ເຂດຫວງຫ້າມທາງການ ແລະ ຕ້ອງຢູ່ສະຖານທີ່ກວ້າງຂວາງ, ບໍລິເວນໂຮງງານ ຕ້ອງມີເນື້ອທີ່ພຽງພໍ ແລະ ເໝາະສົມກັບກິດຈະການ, ການຂົນສົ່ງສະດວກສະບາຍບໍ່ກີດຂວາງການສັນຈອນໄປມາ ທັງຮັບປະກັນຄວາມປອດໄພ, ບໍ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ. ພ້ອມນີ້, ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ.

**6.1.2.** ໂຮງງານອຸດສາຫະກໍາປຸງແຕ່ງໄມ້ທຸກຂັ້ນ ຕ້ອງປະກອບມີ: ຫ້ອງການບໍລິຫານ, ອາຄານປຸງແຕ່ງໄມ້, ສາງ, ສະຖານທີ່ເກັບມ້ຽນວັດຖຸດິບ ແລະ ຜະລິດຕະພັນສໍາເລັດຮູບ, ລະບົບກໍາຈັດ ແລະ ບໍາບັດສິ່ງເສດເຫຼືອຈາກໂຮງງານ; ຈັດໃຫ້ມີສິ່ງອໍານວຍຄວາມສະດວກໃຫ້ແກ່ຄົນງານ ເຊັ່ນ: ບ່ອນພັກຜ່ອນຄົນງານ, ຫ້ອງນໍ້າ ແລະ ສິ່ງອໍານວຍຄວາມສະດວກອື່ນໆທີ່ຈໍາເປັນ.

6.1.3. ຕ້ອງມີລະບົບໄຟຟ້າ ທີ່ຮັບປະກັນຄວາມປອດໄພ ແລະ ມີລະບົບນໍ້າໃຊ້ຢ່າງພຽງພໍ.

**6.2. ມາດຕະຖານດ້ານອາຄານໂຮງງານ**

6.2.1. ອາຄານໂຮງງານປຸງແຕ່ງໄມ້ທຸກຂັ້ນ ໂຄງສ້າງຕ້ອງໜັ້ນໜາແຂງແຮງ, ເສົາເຮັດດ້ວຍເບຕົງ, ເສົາເຫຼັກ ຫຼື ເສົາໄມ້ທີ່ທົນທານຖາວອນ, ພື້ນເຮັດດ້ວຍເບຕົງ, ມຸງດ້ວຍກະເບື້ອງ ຫຼື ສັງກະສີ; ຄວາມສູງແຕ່ພື້ນຫາເພດານບໍ່ຕໍ່າກວ່າ 4 ແມັດ, ໂດຍກໍ່ສ້າງຖືກຕ້ອງ ຕາມລະບຽບການກ່ຽວກັບການຄຸ້ມຄອງການປຸກສ້າງ ຂອງຂະແໜງໂຍທາທິການ ແລະ ຂົນສົ່ງ.

6.2.2. ຕ້ອງຈັດໃຫ້ມີຂະບວນການຜະລິດ, ການປຸງແຕ່ງ ແບບເປັນລະບົບຕໍ່ເນື່ອງທີ່ບໍ່ສັບສົນ ແລະ ມີຄວາມເປັນລະບຽບຮຽບຮ້ອຍດີ.

6.2.3. ຕ້ອງຕິດຕັ້ງລະບົບໄຟຟ້າທີ່ຮັບປະກັນຄວາມປອດໄພ ເຊັ່ນ: ລະບົບໄຟຟ້າເຄື່ອງຈັກ, ໄຟຟ້າແສງສະຫວ່າງ...

6.3. ມາດຕະຖານດ້ານຂະບວນການປຸງແຕ່ງ ແລະ ເຄື່ອງຈັກ

ໂຮງງານອຸດສາຫະກຳປຸງແຕ່ງໄມ້ທຸກຂັ້ນ ຕ້ອງມີຂະບວນການປຸງແຕ່ງ, ຊຶ່ງປະກອບດ້ວຍເຄື່ອງຈັກ, ເຄື່ອງມືອຸປະກອນທີ່ຈຳເປັນ ໂດຍຈັດໃຫ້ເປັນລະບົບຕ່ອງໂສ້ການຜະລິດ ທີ່ຖືກຕ້ອງຕາມມາດຕະຖານເຕັກນິກ ແລະ ມີຄວາມປອດໄພ ໃນເວລານຳໃຊ້.

**6.3.1. ໂຮງງານປຸງແຕ່ງໄມ້ຂັ້ນໜຶ່ງ** (ໂຮງງານເລື່ອຍໄມ້, ໂຮງງານປຸງແຕ່ງໄມ້ເຄິ່ງສຳເລັດຮູບ) ຕ້ອງມີຂະບວນການປຸງແຕ່ງ ໂດຍຕິດຕັ້ງເຄື່ອງຈັກຕົ້ນຕໍຈຳນວນໜຶ່ງ ຊຶ່ງຂຶ້ນກັບຂັ້ນຕອນຂອງການປຸງແຕ່ງ ເຊັ່ນ: ເຄື່ອງຈັກເລື່ອຍ, ຈັກຕັດ, ຈັກຊອຍ; ຈັກປອກ ຫຼື ຝານ, ຈັກຍົກ (ເດຣນ), ເຕົາອົບໄມ້ (ສຳລັບໄມ້ທີ່ຈຳເປັນອົບ); ເຄື່ອງຈັກບົດ ແລະ ເຄື່ອງຈັກອື່ນໆ.

**6.3.2. ໂຮງງານປຸງແຕ່ງໄມ້ຂັ້ນສອງ:**

- <u>ໂຮງງານປຸງແຕ່ງໄມ້ສຳເລັດຮູບ</u>: ຕ້ອງມີຂະບວນການປຸງແຕ່ງ ໂດຍຕິດຕັ້ງເຄື່ອງຈັກຕົ້ນຕໍຈຳນວນໜຶ່ງ ຊຶ່ງຂຶ້ນກັບຂັ້ນຕອນຂອງການປຸງແຕ່ງ ເຊັ່ນ: ຈັກຕັດ, ຈັກປອກ ຫຼື ຝານ, ຈັກບົດ, ຈັກອັດ ຫຼື ໜີບ, ຈັກຍົກ (ເດຣນ), ເຕົາອົບໄມ້ (ສຳລັບໄມ້ທີ່ຈຳເປັນອົບ) ແລະ ເຄື່ອງຈັກອື່ນໆ.
- <u>ໂຮງງານເຟີນີເຈີ ແລະ ໂຮງງານຜະລິດເຄື່ອງໃຊ້ສອຍດ້ວຍໄມ້</u>: ຕ້ອງມີຂະບວນການປຸງແຕ່ງ ໂດຍຕິດຕັ້ງເຄື່ອງຈັກຕົ້ນຕໍຈຳນວນໜຶ່ງ ຊຶ່ງຂຶ້ນກັບຂັ້ນຕອນຂອງການປຸງແຕ່ງ ເຊັ່ນ: ຈັກເລື່ອຍ, ຈັກຊອຍ, ຈັກຕັດ, ຈັກກົບ, ຈັກເຊາະຮ່ອງ, ຈັກປາດເດືອຍ, ຈັກຕໍ່ໄມ້, ຈັກໂຮເຕີ, ຈັກເຈາະ, ຈັກຂັດ, ລະບົບດູດຝຸ່ນ, ອຸປະກອນທາສີ ຫຼື ພົ່ນສີ ແລະ ເຄື່ອງຈັກອື່ນໆ.

ບັນດາເຄື່ອງຈັກທັງໝົດດັ່ງກ່າວ ຕ້ອງຕິດຕັ້ງໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກ, ມີລະບົບຕ່ອງໂສ້ການຜະລິດທີ່ເໝາະສົມ, ນຳໃຊ້ເທັກໂນໂລຊີທັນສະໄໝ ແລະ ມີຄວາມປອດໄພໃນເວລານຳໃຊ້.

<u>ມາດຕາ 7</u>: ມາດຕະຖານດ້ານວິຊາການເຕັກນິກ ແລະ ຄົນງານ

ໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕ້ອງປະກອບມີບຸກຄະລາກອນທີ່ມີຄຸນນະວຸດທິ ແລະ ສອດຄ່ອງກັບແຕ່ລະຕຳແໜ່ງງານ. ມີວິຊາການວິຊາສະເພາະທີ່ມີໃບປະກາສະນີຍະບັດ ຫຼື ໃບຢັ້ງຢືນ ຮັບຮອງດ້ານເຕັກນິກວິຊາການທີ່ຖືກຕ້ອງ ປະຈຳຢູ່ໂຮງງານ. ສຳລັບໂຮງງານທີ່ນຳໃຊ້ເຄື່ອງຈັກພິເສດ ຕ້ອງມີວິຊາການສະເພາະ ທີ່ມີໃບຢັ້ງຢືນກ່ຽວກັບການນຳໃຊ້ເຄື່ອງຈັກພິເສດນັ້ນ. ໃນນີ້, ວິຊາການເຕັກນິກ ແລະ ຄົນງານ ຕ້ອງໄດ້ຜ່ານການຝຶກອົບຮົມ ຍົກລະດັບທາງດ້ານວິຊາການ ຢ່າງເປັນປະຈຳ.

<u>ມາດຕາ 8</u>: ມາດຕະຖານດ້ານຜະລິດຕະພັນ

ໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕ້ອງປຸງແຕ່ງໃຫ້ເປັນຜະລິດຕະພັນໄມ້ສຳເລັດຮູບ ດ້ວຍການສ້າງມູນຄ່າເພີ່ມໃຫ້ໄດ້ຫຼາຍ ໂດຍນຳໃຊ້ລະບົບການຄຸ້ມຄອງການຜະລິດ, ການເພີ່ມຜະລິດຕະພາບ ແລະ ການພັດທະນາຜະລິດຕະພັນຂອງໂຮງງານ. ເພື່ອແນໃສ່ເຮັດໃຫ້ຜະລິດຕະພັນມີຄຸນນະພາບດີ ແລະ ມີມາດຕະຖານສູງ ເພື່ອຈຳໜ່າຍພາຍໃນ ແລະ ສົ່ງອອກຕ່າງປະເທດ.

<u>ມາດຕາ 9</u>: ມາດຕະຖານດ້ານຄວາມປອດໄພ, ສຸຂະອະນາໄມ ແລະ ສິ່ງແວດລ້ອມ

9.1. ໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕ້ອງມີໜ່ວຍງານບໍລິຫານຄວາມປອດໄພຢູ່ໃນໂຮງງານ ເພື່ອຫຼີກລ່ຽງອຸປະຕິເຫດແຮງງານ, ພະຍາດອາຊີບ ແລະ ສຸຂະພາບຂອງຄົນງານ.

9.2. ຕ້ອງຕິດຕັ້ງເຄື່ອງປ້ອງກັນອັນຕະລາຍຈາກເຄື່ອງຈັກ ເຊັ່ນ: ປ້າຍເຕືອນ, ປ້າຍຫ້າມ ໃສ່ສະຖານທີ່ທີ່ເປັນອັນຕະລາຍ ແລະ ພ້ອມທັງມີແຜນການບຳລຸງຮັກສາເຄື່ອງຈັກ ອຸປະກອນເປັນປະຈຳ.

9.3. ຕ້ອງຕິດຕັ້ງລະບົບປ້ອງກັນອັກຄີໄພຢູ່ພາຍໃນໂຮງງານໃຫ້ພຽງພໍ ເຊັ່ນ: ລະບົບສັນຍານເຕືອນໄພ, ບັ້ງດັບເພີງ ຫຼື ລະບົບນ້ຳມອດໄຟ ແລະ ສາມາດນຳໃຊ້ໄດ້.

9.4. ຕ້ອງປະກອບອຸປະກອນປ້ອງກັນຝຸ່ນ, ກິ່ນ, ສຽງ ໃຫ້ແກ່ຄົນງານ ເຊັ່ນ: ເຄື່ອງອຸປະກອນປິດປາກ, ຫູ, ດັງ, ຕາ, ເກີບ, ໝວກ, ສົບມື (ຂຶ້ນກັບແຕ່ລະຂອດງານ) ແລະ ຊຸດເຄື່ອງນຸ່ງເຮັດວຽກຂອງຄົນງານ.

9.5. ຕ້ອງຈັດໃຫ້ມີນ້ຳດື່ມສະອາດ, ຕູ້ຢາສຸກເສີນ, ຫ້ອງນ້ຳ, ຫ້ອງປ່ຽນເຄື່ອງນຸ່ງ ໃຫ້ພຽງພໍຕາມຄວາມເໝາະສົມ.

9.6. ຕ້ອງຕິດຕັ້ງລະບົບລະບາຍອາກາດໃຫ້ພຽງພໍ, ບໍ່ແອອັດ, ມີຄວາມເປັນລະບຽບຮຽບຮ້ອຍດີ ແລະ ຈັດໃຫ້ມີແສງສະຫວ່າງພຽງພໍ.

9.7. ເພື່ອຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ໂຮງງານປຸງແຕ່ງໄມ້ທຸກຂັ້ນ ຕ້ອງມີລະບົບບຳບັດສິ່ງເສດເຫຼືອຈາກໂຮງງານ ເຊັ່ນ: ເສດໄມ້, ເສດຂີ້ເລື່ອຍ, ເສດຂີ້ກົບ ແລະ ນ້ຳເສັຍຄຸນ(ຖ້າມີ).

9.8. ໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕ້ອງເຮັດການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ຕາມຂໍ້ຕົກລົງຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 1222/ອຄ, ລົງວັນທີ່ 7/12/05, ກໍ່ຄືປະຕິບັດລະບຽບການສິ່ງແວດລ້ອມໂຮງງານ ເຊັ່ນ: ຝຸ່ນ, ຄວັນ, ນ້ຳເປື້ອນ, ສິ່ງເສດເຫຼືອ, ຄວາມສັ່ນສະເທືອນ, ການສັນຈອນ ແລະ ອື່ນໆ.

## ໝວດທີ III

## ມາດຕະຖານໂຮງງານປຸງແຕ່ງໄມ້ ຂະໜາດນ້ອຍແບບຄອບຄົວ

**ມາດຕາ 10:** ມາດຕະຖານໂຮງງານປຸງແຕ່ງໄມ້ຂະໜາດນ້ອຍແບບຄອບຄົວ

**10.1. ດ້ານສະຖານທີ່ຕັ້ງໂຮງງານ:** ໂຮງງານປຸງແຕ່ງໄມ້ຂະໜາດນ້ອຍ ແບບຄອບຄົວ ຕ້ອງຕັ້ງຢູ່ນອກເຂດປ່າສະຫງວນ, ປ່າປ້ອງກັນ, ເຂດຫວງຫ້າມທາງການ, ບໍ່ຕັ້ງຢູ່ໃນເຂດຊຸມຊົນແອອັດ, ບໍ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ.

**10.2. ດ້ານອາຄານໂຮງງານ:** ໃຫ້ປະຕິບັດຖືກຕ້ອງຕາມລະບຽບການ ກ່ຽວກັບການຄຸ້ມຄອງການປຸກສ້າງ ຂອງຂະແໜງໂຍທາທິການ ແລະ ຂົນສົ່ງ.

**10.3. ດ້ານວັດຖຸດິບ:** ວັດຖຸດິບທີ່ນຳໃຊ້ເຂົ້າໃນໂຮງງານປຸງແຕ່ງໄມ້ຂະໜາດນ້ອຍແບບຄອບຄົວ ຕົ້ນຕໍແມ່ນແນໃສ່ໄມ້ເສດເຫຼືອຈາກໂຮງງານປຸງແຕ່ງໄມ້ຂັ້ນ I (ໂຮງງານເລື່ອຍໄມ້, ໂຮງງານປຸງແຕ່ງໄມ້ເຄິ່ງສຳເລັດຮູບ) ເຊັ່ນ: ໄມ້ປີກ, ໄມ້ປາຍ, ໄມ້ກິ່ງງ່າ, ຕໍໄມ້, ປູດໄມ້ ແລະ ໄມ້ເສດອື່ນໆ.

**10.4. ດ້ານການປຸງແຕ່ງ ແລະ ເຄື່ອງຈັກ:** ໂຮງງານປຸງແຕ່ງໄມ້ຂະໜາດນ້ອຍແບບຄອບຄົວ ເປັນການປຸງແຕ່ງໄມ້ ແບບຫັດຖະກຳຄອບຄົວ, ດ້ວຍຂະບວນການຜະລິດຕົ້ນຕໍດັ່ງນີ້: ການຕັດ, ການຜ່າ, ການຊອຍ (ຊິ້ນສ່ວນຜະລິດຕະພັນ), ການກົບ, ການເຈາະ, ການແກະສະຫຼັກ, ການຄວັດ, ການຂັດ, ການທາສີ... ຊຶ່ງນຳໃຊ້ເຄື່ອງຈັກຕົ້ນຕໍຂະໜາດນ້ອຍຈຳນວນໜຶ່ງ ເພື່ອທຸ່ນແຮງຕາມຄວາມຈຳເປັນ ເຊັ່ນ: ຈັກຕັດ, ຈັກເຈາະ, ຈັກຊອຍ (ຂະໜາດນ້ອຍ), ຈັກໂຮເຕີ, ຈັກກົບ ແລະ ເຄື່ອງມືສຳລັບການແກະສະລັກ ເຊັ່ນ: ພ້າ, ຂວານ, ຊີ່ວ, ຄ້ອນຕີ...)...

**10.5. ດ້ານຜະລິດຕະພັນ:** ຕ້ອງປຸງແຕ່ງເປັນຜະລິດຕະພັນໄມ້ສຳເລັດຮູບ ທີ່ສ້າງມູນຄ່າເພີ້ມໃຫ້ໄດ້ຫຼາຍ, ຕາມທີ່ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍຮູບແບບ ແລະ ຂະໜາດຜະລິດຕະພັນໄມ້ ເລກທີ 1415/ອຄ, ລົງວັນທີ 28/8/08. ໂດຍຮັບປະກັນໃຫ້ມີຄຸນະພາບດີ ເພື່ອສະໜອງຕະຫຼາດພາຍໃນ ແລະ ສົ່ງອອກຕ່າງປະເທດ.

**10.6. ດ້ານຄວາມປອດໄພ ແລະ ສຸຂະອະນາໄມ:** ຕ້ອງຈັດໃຫ້ມີເຄື່ອງອຸປະກອນທີ່ຈຳເປັນຄືດັ່ງນີ້:

- ຕ້ອງມີອຸປະກອນປ້ອງກັນຝຸ່ນ, ກິ່ນສີ... ໂດຍສະເພາະອຸປະກອນປິດປາກ, ປິດດັງ, ລີບມື... ຂຶ້ນກັບຄວາມຈຳເປັນຂອງງານ.
- ຕ້ອງມີນ້ຳດື່ມສະອາດ, ຢາສຸກເສີນ, ຫ້ອງນ້ຳສະອາດ ຕາມຄວາມເໝາະສົມ.

**10.7. ດ້ານສິ່ງແວດລ້ອມ:** ເພື່ອຮັບປະກັນບໍ່ໃຫ້ເກີດຜົນກະທົບຕໍ່ຊຸມຊົນໃກ້ຄຽງ ແລະ ສິ່ງແວດລ້ອມ, ຕ້ອງມີວິທີການກຳຈັດສິ່ງເສດເຫຼືອ ເຊັ່ນ: ເສດໄມ້, ຂີ້ເລື່ອຍ, ຂີ້ກົບ ແລະ ອື່ນໆ. ໃນກໍລະນີ ການດຳເນີນກິດຈະການຫາກມີຜົນກະທົບຕໍ່ຊຸມຊົນໃກ້ຄຽງ ແລະ ມີການຮ້ອງຟ້ອງຕໍ່ໂຮງງານ, ໃຫ້ປະຕິບັດຕາມມາດຕາ 18 ຂອງຂໍ້ຕົກລົງສະບັບນີ້.

**<u>ມາດຕາ 11</u>: ເງື່ອນໄຂການເຄື່ອນໄຫວ ຂອງໂຮງງານປຸງແຕ່ງໄມ້ຂະໜາດນ້ອຍແບບຄອບຄົວ**

**11.1. ຂໍ້ຫ້າມ:**

- ຫ້າມຂຸດຄົ້ນ ແລະ ບໍ່ໃຫ້ເອົາໄມ້ທີ່ບໍ່ຖືກຕ້ອງຕາມລະບຽບການກ່ຽວກັບປ່າໄມ້ ເປັນວັດຖຸດິບເຂົ້າປ້ອນໂຮງງານ.
- ຫ້າມບໍ່ໃຫ້ເຮັດການບໍລິການເລື່ອຍ ແລະ ທຳການເລື່ອຍໄມ້ຕິດັບ ແລະ ແປຮູບ ເພື່ອຈຳໜ່າຍ, ໃຫ້ຮັບໃຊ້ເພື່ອປຸງແຕ່ງເປັນຜະລິດຕະພັນໄມ້ສຳເລັດຮູບ ພາຍໃນໂຮງງານຂອງຕົນ.
- ຫ້າມບໍ່ໃຫ້ເຮັດທຸລະກິດທາງດ້ານການຄ້າໄມ້ທີ່ເປັນວັດຖຸດິບຂອງຕົນ.
- ຫ້າມບໍ່ໃຫ້ເອົາກິດຈະການໄປຂາຍ ແລະ ໄປຮ່ວມທຶນກັບຕ່າງປະເທດ, ເວັ້ນເສຍແຕ່ໄດ້ຮັບອະນຸຍາດລົງທຶນສະເພາະຕາມລະບຽບການຂອງການລົງທຶນ.

**11.2. ຂໍ້ອະນຸຍາດ:**

- ໃຫ້ປຸງແຕ່ງໄມ້ເປັນຜະລິດຕະພັນໄມ້ສຳເລັດຮູບ ໂດຍສ້າງມູນຄ່າເພີ່ມໃຫ້ໄດ້ຫຼາຍທີ່ສຸດ, ເພື່ອຈຳໜ່າຍພາຍໃນ ແລະ ສົ່ງອອກຕ່າງປະເທດ.
- ໃຫ້ພັດທະນາຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ, ເຕັກນິກການອອກແບບ ລວມທັງສີນີ້ ແລະ ລວດລາຍສິນລະປະທີ່ເປັນເອກະລັກຂອງພາຍໃນ ແລະ ຕ່າງປະເທດ.
- ໃຫ້ມີການແລກປ່ຽນປະສົບການ ແລະ ຂໍ້ມູນຂ່າວສານ ທາງດ້ານເຕັກນິກຂອງໂຮງງານດ້ວຍກັນ.
- ໃຫ້ໂຮມຕົວກັນເປັນກຸ່ມການຜະລິດ ຫຼື ເຂົ້າເປັນສະມາຊິກຂອງກຸ່ມ.

**<u>ມາດຕາ 12</u>: ການພິຈາລະນາອອກໃບອະນຸຍາດ**

ບັນດາໂຮງງານປຸງແຕ່ງໄມ້ຂະໜາດນ້ອຍແບບຄອບຄົວ ທີ່ມີເງື່ອນໄຂມາດຕະຖານ ຕາມທີ່ກ່າວມາຂ້າງເທິງນັ້ນ, ໃຫ້ປະກອບເອກະສານເພື່ອຂໍອະນຸຍາດດຳເນີນກິດຈະການໂຮງງານ ຕາມມາດຕາ 5 ແລະ ມາດຕາ 6 ຂອງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ເລກທີ 1301/ອຄ, ລົງວັນທີ 30/7/07 ແລະ ໃຫ້ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ເປັນຜູ້ພິຈາລະນາອອກໃບອະນຸ ຍາດດຳເນີນກິດຈະການໂຮງງານໃຫ້ໃນກຳນົດເວລາໜຶ່ງປີ ແລະ ສາມາດຕໍ່ໄດ້ຕາມເງື່ອນໄຂມາດຕະຖານໃນຂໍ້ຕົກລົງສະບັບນີ້ ເປັນແຕ່ລະກໍລະນີ, ຕາມການແບ່ງຂັ້ນຄຸ້ມຄອງໃນມາດຕາ 45 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ.

## ໝວດທີ IV
## ການດັດສົມໂຮງງານອຸດສາຫະກຳປຸງແຕ່ງໄມ້

<u>ມາດຕາ 13:</u> ການດັດສົມໂຮງງານອຸດສາຫະກຳປຸງແຕ່ງໄມ້

ໂດຍປະຕິບັດຕາມຂໍ້ທີ່ 12 ຂອງຄຳສັ່ງນາຍົກລັດຖະມົນຕີ ເລກທີ່ 17/ນຍ, ລົງວັນທີ່ 22/9/08, ໃຫ້ດັດສົມ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ດັ່ງລຸ່ມນີ້:

13.1. ໂຮງງານອຸດສາຫະກຳປຸງແຕ່ງໄມ້ ທຸກຂັ້ນ, ທຸກຂະໜາດ ຕ້ອງໄດ້ຮັບໃບອະນຸຍາດດຳເນີນກິດຈະການໂຮງງານ ຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ, ຈຶ່ງສາມາດເຄື່ອນໄຫວກິດຈະການໂຮງງານໄດ້.

13.2. ໂຮງງານອຸດສາຫະກຳປຸງແຕ່ງໄມ້ທຸກຂັ້ນ, ທຸກຂະໜາດ ທີ່ໄດ້ຮັບອະນຸຍາດດຳເນີນກິດຈະການໂຮງງານມາກ່ອນ, ແຕ່ມາດຕະຖານໂຮງງານສ່ວນໜຶ່ງບໍ່ທັນຄົບຖ້ວນຕາມທີ່ກຳນົດໄວ້ໃນມາດຕາ 5, 6, 7, 8, 9 ຂອງຂໍ້ຕົກລົງສະບັບນີ້, ໃຫ້ປະຕິບັດຕາມແຕ່ລະກໍລະນີດີ:

- ສຳລັບໂຮງງານທີ່ເຄື່ອນໄຫວບໍ່ຖືກຕ້ອງ ຕາມຈຸດປະສົງການອະນຸຍາດດຳເນີນກິດຈະການໂຮງງານ ຕ້ອງປິດກິດຈະການໂຮງງານ ແລະ ຮື້ຖອນທັງໝົດ.
- ສຳລັບໂຮງງານທີ່ເຄື່ອນໄຫວຖືກຕ້ອງຕາມຈຸດປະສົງ ຂອງການອະນຸຍາດດຳເນີນກິດຈະການໂຮງງານ, ຕ້ອງປັບປຸງໂຮງງານໃຫ້ໄດ້ຕາມມາດຕະຖານທີ່ລະບຸໄວ້ ໂດຍກຳນົດເວລາຈະແຈ້ງ ແລະ ສະເໜີຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ເພື່ອຮັບຮອງເອົາ.

13.3. ໂຮງງານອຸດສາຫະກຳປຸງແຕ່ງໄມ້ ທຸກຂັ້ນ, ທຸກຂະໜາດ ທີ່ຢູ່ໃນໄລຍະການປັບປຸງໂຮງງານ ຕ້ອງຢຸດເຊົາການເຄື່ອນໄຫວກິດຈະການຊົ່ວຄາວ, ເພື່ອປັບປຸງໂຮງງານ ໃຫ້ໄດ້ຕາມມາດຕະຖານທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້, ໂດຍມີແຜນການປັບປຸງ ແລະ ກຳນົດເວລາຈະແຈ້ງ. ພາຍຫຼັງປັບປຸງໂຮງງານສຳເລັດແລ້ວ ຕ້ອງໄດ້ຮັບໃບອະນຸຍາດດຳເນີນກິດຈະການໂຮງງານ ກ່ອນ ຈຶ່ງສາມາດເຄື່ອນໄຫວກິດຈະການໄດ້.

13.4. ໂຮງງານອຸດສາຫະກຳປຸງແຕ່ງໄມ້ ທຸກຂັ້ນ, ທຸກຂະໜາດ ທີ່ຖືກຢຸດເຊົາຖາວອນ ແລະ ໂຮງງານທີ່ເຄື່ອນໄຫວກິດຈະການໂດຍບໍ່ໄດ້ຮັບໃບອະນຸຍາດດຳເນີນກິດຈະການໂຮງງານ, ຕ້ອງຢຸດເຊົາກິດຈະການຢ່າງເດັດຂາດ. ໃນກໍລະນີຫາກບໍ່ຢຸດເຊົາ ໃຫ້ປະຕິບັດມາດຕະການຢ່າງເຂັ້ມງວດ ຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານ ແລະ ກ້າວໄປເຖິງການດຳເນີນຄະດີຕາມຂະບວນການຍຸດຕິທຳ.

13.5. ໂຮງງານອຸດສາຫະກຳປຸງແຕ່ງໄມ້ຂັ້ນໜຶ່ງ (ໂຮງງານເລື່ອຍໄມ້, ໂຮງງານປຸງແຕ່ງໄມ້ເຄິ່ງສຳເລັດຮູບ) ທີ່ດຳເນີນການເລື່ອຍໄມ້ແຕ່ຢ່າງດຽວ, ຕ້ອງປັບປຸງໂຮງງານຂອງຕົນ ໃຫ້ກ້າວຂຶ້ນເປັນໂຮງງານປຸງແຕ່ງໄມ້ຂັ້ນສອງ ເພື່ອສ້າງມູນຄ່າເພີ່ມໃນການປຸງແຕ່ງເປັນຜະລິດຕະພັນໄມ້ສຳເລັດຮູບ. ໂດຍສ້າງແຜນການປັບປຸງ ແລະ ກຳນົດເວລາຈະແຈ້ງ, ຖ້າບໍ່ດັ່ງນັ້ນຕ້ອງປິດກິດຈະການໂຮງງານ ແລະ ຮື້ຖອນທັງໝົດ.

13.6. ໂຮງງານອຸດສາຫະກຳປຸງແຕ່ງໄມ້ ທຸກຂັ້ນ, ທຸກຂະໜາດ ທີ່ຕັ້ງຢູ່ໃກ້ເຂດປ່າສະຫງວນ, ປ່າປ້ອງກັນ ແລະ ເຂດຫວງຫ້າມທາງການ, ຊຶ່ງບໍ່ໄດ້ມາດຕະຖານ ຕາມທີ່ກຳນົດໄວ້ໃນມາດຕາ 6, ຂໍ້ 6.1 ຕ້ອງຍົກຍ້າຍໂຮງງານໄປໃນເຂດອຸດສາຫະກຳ ຫຼື ສະຖານທີ່ອື່ນ ທີ່ຖືກຕ້ອງຕາມລະບຽບການກ່ຽວຂ້ອງ ນັບແຕ່ມື້ປະກາດໃຊ້ຂໍ້ຕົກລົງສະບັບນີ້ເປັນຕົ້ນໄປ, ຖ້າບໍ່ດັ່ງນັ້ນຕ້ອງປິດກິດຈະການໂຮງງານ ແລະ ຮື້ຖອນທັງໝົດ.

13.7. ໂຮງງານອຸດສາຫະກຳປຸງແຕ່ງໄມ້ ທຸກຂັ້ນ, ທຸກຂະໜາດ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນກິດຈະການຖືກຕ້ອງຕາມລະບຽບກົດໝາຍ, ຕ້ອງໄດ້ເຕົ້າໂຮມກັນເພື່ອຈັດຕັ້ງເປັນສະມາຄົມ ຫຼື ເປັນກຸ່ມໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ

ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເລກທີ 125/ນຍ, ລົງວັນທີ 24/7/03 ເພື່ອດຳເນີນການຜະລິດຕາມທິດທາງລວມຂອງລັດຖະບານ.

## ໝວດທີ V
## ການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້

**ມາດຕາ 14: ການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້**

ການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ທຸກຂັ້ນ, ທຸກຂະໜາດ ຕ້ອງປະຕິບັດຕາມຂໍ້ຕົກລົງສະບັບນີ້, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ແລະ ລະບຽບກົດໝາຍອື່ນໆ ທີ່ກ່ຽວຂ້ອງ.

**ມາດຕາ 15: ການສ້າງແຜນການຜະລິດຂອງໂຮງງານອຸດສາຫະກຳປຸງແຕ່ງໄມ້**

ໂຮງງານອຸດສາຫະກຳປຸງແຕ່ງໄມ້ທຸກຂັ້ນ, ທຸກຂະໜາດ ລວມທັງໂຮງງານຂະໜາດນ້ອຍແບບຄອບຄົວ ຕ້ອງສ້າງແຜນການຜະລິດ ແລະ ແຜນການຈຳໜ່າຍປະຈຳປີຂອງໂຮງງານ ຕາມລະບຽບການຂອງກະຊວງອຸດສາຫະກຳ ແລະ ການຄ້າ ວາງອອກ. ໂດຍຜ່ານການກວດກາ ແລະ ຢັ້ງຢືນ ຈາກພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ແລ້ວສົ່ງມາຍັງກະຊວງອຸດສາຫະກຳ ແລະ ການຄ້າ (ກົມອຸດສາຫະກຳ) ກ່ອນວັນທີ່ 15 ເດືອນ ມັງກອນ ຂອງທຸກໆປີ ພ້ອມທັງລະຫຼຸບລາຍງານຜົນຂອງການຈັດຕັ້ງປະຕິບັດແຜນການຂອງປີຜ່ານມາ.

ກະຊວງ ອຸດສາຫະກຳ ແລະ ການຄ້າ ເປັນຜູ້ພິຈາລະນາ ຄວາມຕ້ອງການດ້ານວັດຖຸດິບ ສຳລັບປ້ອນໂຮງງານ, ໂດຍຜ່ານການຢັ້ງຢືນຈາກກຸ່ມອຸດສາຫະກຳປຸງແຕ່ງໄມ້ ທີ່ຂຶ້ນກັບສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ແລະ ຜ່ານການຄົ້ນຄວ້າຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ຊຶ່ງອີງໃສ່ແຜນການຜະລິດ, ມາດຕະຖານ ແລະ ເງື່ອນໄຂຂອງໂຮງງານ ຕາມທີ່ໄດ້ກຳນົດໄວ້ຢູ່ໃນຂໍ້ຕົກລົງສະບັບນີ້ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຈັດສັນ ແບ່ງປັນໂກຕາໄມ້ ຕາມການຕົກລົງຂອງລັດຖະບານ, ບົນພື້ນຖານ " **ດັດສົມ ສະມາຄົມ ໂຄຕາ** ".

**ມາດຕາ 16: ການເຄື່ອນຍ້າຍໄມ້ ແລະ ຜະລິດຕະພັນໄມ້**

ໂຮງງານອຸດສາຫະກຳປຸງແຕ່ງໄມ້ທຸກຂັ້ນ ຕ້ອງປະຕິບັດລະບຽບການສະເພາະ ຂອງກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ ແລະ ກະຊວງກະສິກຳ-ປ່າໄມ້ ກ່ຽວກັບການອອກອະນຸຍາດ, ເອກະສານກຳກັບການເຄື່ອນຍ້າຍໄມ້ ແລະ ຜະລິດຕະພັນໄມ້ ຢູ່ພາຍໃນປະເທດ ແລະ ສົ່ງອອກຕ່າງປະເທດ.

## ໝວດທີ VI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 17: ນະໂຍບາຍຕໍ່ຜູ້ມີຜົນງານ**

ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ທີ່ເຄື່ອນໄຫວຖືກຕ້ອງຕາມລະບຽບການ ແລະ ມີຜົນງານດີເດັ່ນ, ນຳໃຊ້ວັດຖຸດິບໄມ້ ເຂົ້າໃນການຜະລິດກໍ່ຄືການສ້າງມູນຄ່າເພີ່ມ ເພື່ອປຸງແຕ່ງເປັນຜະລິດຕະພັນສຳເລັດຮູບທີ່ໄດ້ມາດຕະຖານ ເພື່ອຮັບໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ, ຈະໄດ້ຮັບພິຈາລະນາສົ່ງເສີມ ຕາມທີ່ກຳນົດໄວ້ໃນມາດຕາ 3 ຂອງດຳລັດວ່າດ້ວຍການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍອຸດສາ

ທະກຳປຸງແຕ່ງ ເລກທີ 67/ບຍ ແລະ ນະໂຍບາຍຂອງຂະແໜງການທີ່ກ່ຽວຂ້ອງ ແລະ ຈະໄດ້ຮັບການພິຈາລະນາຍ້ອງຍໍ ຕາມມາດຕາ 52 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ.

<u>ມາດຕາ 18:</u> ມາດຕະການຕໍ່ຜູ້ລະເມີດ

ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຫາກບໍ່ປະຕິບັດຕາມຂໍ້ຕົກລົງສະບັບນີ້, ໂດຍສະເພາະ ການດັດສົມໂຮງງານປຸງແຕ່ງໄມ້ທີ່ກຳນົດໄວ້ໃນມາດຕາ 13, ຈະຖືກປະຕິບັດມາດຕະການຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານ ອຸດສາຫະກຳປຸງແຕ່ງ ເລກທີ 1301/ອຄ, ລົງວັນທີ່ 30/7/07 ຢ່າງເຂັ້ມງວດ ຫຼື ກ້າວໄປເຖິງມາດຕະການທາງອາຍາ ແລະ ມາດຕະການໂທດເພີ່ມ ຕາມມາດຕາ 57 ແລະ ມາດຕາ 58 ຂອງກົດໝາຍ ວ່າດ້ວຍອຸດສາຫະກຳປຸງແຕ່ງ ແລະ ສັ່ງປິດກິດຈະການໂຮງງານໂດຍບໍ່ມີເງື່ອນໄຂຕໍ່ລອງ ຕາມແຕ່ລະກໍລະນີ.

ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງໄມ້ຂະໜາດນ້ອຍແບບຄອບຄົວ ຫາກດຳເນີນກິດຈະການບໍ່ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍຂອງການອະນຸຍາດ, ລັກລອບ ແລະ ເກັບຊື້ວັດຖຸດິບ(ໄມ້) ເຂົ້າປຸງແຕ່ງໂດຍບໍ່ຖືກຕ້ອງ, ເປັນຜົນກະທົບຕໍ່ປະຊາຊົນໃກ້ຄຽງ (ມີການຮ້ອງຟ້ອງຂອງປະຊາຊົນ), ບໍ່ປະຕິບັດພັນທະພາສີ, ອາກອນ ແລະ ພັນທະອື່ນໆ ຈະຖືກປະຕິບັດມາດຕະການ ຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ເລກທີ 1301/ອຄ, ລົງວັນທີ່ 30/7/07 ຢ່າງເຂັ້ມງວດ ຫຼື ກ້າວໄປເຖິງມາດຕະການ ທາງອາຍາ ແລະ ສັ່ງປິດກິດຈະການໂຮງງານໂດຍບໍ່ມີເງື່ອນໄຂຕໍ່ລອງ ຕາມແຕ່ລະກໍລະນີ.

## ໝວດທີ VII
## ຂໍ້ກຳນົດມ້ອນທ້າຍ

<u>ມາດຕາ 19:</u> ການຈັດຕັ້ງປະຕິບັດ

ມອບໃຫ້ກົມອຸດສາຫະກຳ ເປັນຜູ້ຊີ້ນຳ, ຕິດຕາມ ກວດກາ, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ໂດຍໃຫ້ສອດຄ່ອງ ແລະ ເປັນເອກະພາບກັບລະບຽບກົດໝາຍຂອງຂະແໜງການທີ່ກ່ຽວຂ້ອງ.

ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ມີໜ້າທີ່ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໃຫ້ໄດ້ຮັບຜົນດີ ແລະ ເຂັ້ມງວດ.

<u>ມາດຕາ 20:</u> ຜົນສັກສິດ ແລະ ການນຳໃຊ້

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ບັນດາຂໍ້ຕົກລົງ, ລະບຽບການ ແລະ ແຈ້ງການ ກ່ຽວກັບໂຮງງານອຸດສາຫະກຳປຸງແຕ່ງໄມ້ ທີ່ປະກາດໃຊ້ໃນເມື່ອກ່ອນທາກຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ ແລະ ໃຫ້ນຳໃຊ້ຂໍ້ຕົກລົງສະບັບນີ້ປ່ຽນແທນ.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳ ແລະ ການຄ້າ

ດຣ. ນາມ ວິຍະເກດ